ສະບັບທີ 21
ຕຸລາ – ທັນວາ 2024

ຈົດໝາຍຂ່າວ

ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ



ສະບາຍດີ ປີໃໝ່ 2025!

[ກົດເຂົ້າຮັບຊົມປະຕິທິນກົດໝາຍ 2025]



ກອງປະຊຸມ ແລະ ກິດຈະກຳ LIWG

LIWG ປະສານງານກຸ່ມການເຮັດວຽກ ແລະ ຊຸມຊົນໃນການປະຕິບັດໃນທົ່ວປະເທດລາວ ເພື່ອສ້າງການເຊື່ອມຕໍ່ ແລະ ຄວາມໄວ້ວາງໃຈສຳລັບການສົນທະນາ ແລະ ການມີສ່ວນຮ່ວມໃນແກ້ໄຂບັນຫາເພື່ອປົກປ້ອງສິດໃນການຄອບຄອງທີ່ດິນ. ອ່ານກ່ຽວກັບກິດຈະກຳຫຼ້າສຸດໃນໜ້າທີ່ 2 & 3.



ອັບເດດວຽກໂຄງການ PIASVC

ໂຄງການມີຈຸດມຸ້ງໝັ້ນທີ່ຈະປັບປຸງການເຂົ້າເຖິງຂໍ້ມູນທີ່ກ່ຽວຂ້ອງກັບທີ່ດິນ, ສິດທິ ແລະ ໜ້າທີ່ຂອງປະຊາຊົນໂດຍການໃຫ້ບໍລິການ ເພີ່ມຄວາມຮູ້ແລະການໃຫ້ຄຳປຶກສາດ້ານກົດໝາຍແກ່ຊຸມຊົນທີ່ມີຄວາມບອບບາງ ແລະ ໄດ້ຮັບຜົນກະທົບຫຼາຍທີ່ສຸດ. PIASVC ໄດ້ຮັບການສະໜັບສະໜູນດ້ານການເງິນຈາກກອງທຶນເພື່ອການພັດທະນາສັງຄົມ ແຫ່ງປະເທດຍີ່ປຸ່ນ ຜ່ານທະນາຄານໂລກ ແລະ ຮ່ວມສະໜັບສະໜູນດ້ານການເງິນໂດຍ ອົງການເພື່ອການພັດທະນາ ແລະ ການຮ່ວມມືປະເທດສະວິດເຊີແລນ (SDC). ອ່ານເພີ່ມເຕີມໃນໜ້າທີ່ 5 & 6.



ກອງປະຊຸມ ແລະ ກິດຈະກຳ LIWG

ກອງປະຊຸມແລກປ່ຽນບົດຮຽນອົງການຈັດຕັ້ງສັງຄົມ ແລະ ສາກົນ ປະຈຳ 2024

ກອງປະຊຸມແລກປ່ຽນ ແລະ ຖອດຖອນບົດຮຽນລະຫວ່າງສະມາຊິກທີ່ກວມເອົາທັງອົງການຈັດຕັ້ງສັງຄົມ ແລະ ສາກົນ ໃນວັນທີ 6 ທັນວາ 2024 ທີ່ ສູນຝຶກອົບຮົມຂອງແນວລາວສ້າງຊາດ. ກອງປະຊຸມ ໄດ້ນຳເອົາບັນດາສະມາຊິກ, ໂດຍສະເພາະແມ່ນ CSOs ທ້ອງຖິ່ນມາແລກປ່ຽນຂໍ້ມູນຂ່າວສານ ແລະ ບົດຮຽນກ່ຽວກັບບັນຫາທີ່ດິນ ແລະ ປ່າໄມ້ຢູ່ ສປປ ລາວ. ການຮັບຮູ້ສິດທີ່ດິນໃນເຂດປ່າສະຫງວນ ແລະ ໂຄງການ REDD+ ແມ່ນສອງຫົວຂໍ້ທີ່ພົ້ນເດັ່ນທີ່ໄດ້ປຶກສາຫາລືກັນ. ໂຄງການ LIFE ໄດ້ແບ່ງປັນເລື່ອງຜົນສຳເລັດຂອງວຽກງານອາສາສະໝັກຂອງນັກສຶກສາກັບບ້ານເພື່ອສ້າງຕັ້ງເຂດປົກປັກຮັກສາປ່າສະຫງວນ. ກອງປະຊຸມດັ່ງກ່າວໄດ້ສິ້ນສຸດລົງດ້ວຍການວິເຄາະ SWOT ຮ່ວມມື, ຊຸກຍູ້ໃຫ້ສະມາຊິກສາມາດກຳນົດເຂດທີ່ LIWG ສາມາດສະຫນັບສະຫນູນແລະເພີ່ມມູນຄ່າສຳລັບສະມາຊິກ. ສະມາຊິກ CSO ສະເໜີໃຫ້ LIWG ອຳນວຍຄວາມສະດວກໃຫ້ແກ່ໂອກາດການຮຽນຮູ້ ແລະ ການຊ່ວຍເຫຼືອດ້ານວິຊາການ ກ່ຽວກັບການຂຽນບົດສະເໜີ, ການຈັດຕັ້ງປະຕິບັດໂຄງການ ແລະ ການຄົ້ນຄວ້າ. ນອກນີ້, ບັນດາສະມາຊິກກໍ່ຢາກເພີ່ມທະວີການສົນທະນາກັບພາກລັດ ແລະ ພາກທຸລະກິດ ແລະ ສາມາດຍົກສູງຂໍ້ມູນຈາກການປະຕິບັດຂອງສະມາຊິກຢູ່ຮາກຖານເພື່ອເຂົ້າຮ່ວມບັນດາບັນຫາລະດັບມະຫາພາກຢ່າງກວ້າງຂວາງ.”

ການແບ່ງປັນຄວາມຮູ້ - ລະຫວ່າງສະມາຊິກ





ການລົງຢ້ຽມຢາມ ບໍລິສັດຟາມ ແລະ ໂຮງງານຜະລິດກະສິກຳແບບຢ່າງໂດຍທີມງານ CBP

ສະມາຊິກ ຊຸມຊົນແຫ່ງການຮຽນຮູ້ ການລົງທຶນແບບມີຄວາມຮັບຜິດຊອບ (CBP-RAI) ທີ່ມາຈາກຫຼາຍພາກສ່ວນໄດ້ລົງຢ້ຽມຢາມ ບໍລິສັດຟາມ, ໂຮງງານຜະລິດກະສິກຳທີ່ເປັນແບບຢ່າງ ໃນຊ່ວງວັນທີ 29 ຫາ 30 ຕຸລາ 2024. ທີມງານໄດ້ເຂົ້າຮ່ວມຮັບຟັງ ແລະ ຖອດຖອນບົດຮຽນຈາກຜູ້ປະກອບການ ເພື່ອແບ່ງປັນຄວາມຮູ້ ລວມໄປເຖິງການອະທິບາຍເຄັດລັບສຳລັບຂະບວນການຜະລິດໃຫ້ໄດ້ໝາກຜົນຈາກການເຮັດກະສິກຳ ແລະ ເພື່ອໃຫ້ຕອບໂຈດກັບຕະຫຼາດທີ່ຕ້ອງການໃນປະຈຸບັນ. ບົດຮຽນທີ່ທີມງານ CBP ຖອດຖອນໄດ້ແມ່ນວິທີການນຳໃຊ້ນະວັດຕະກຳ ເຄື່ອງມືເທັກໂນໂລຊີໃນການກະຕຸ້ນຜົນຜະລິດກະສິກຳ ແລະ ການຄວບຄຸມຄຸນະພາບທີ່ທາງບໍລິສັດສາມາດທີ່ຈະສົ່ງອອກສູ່ຮ້ານຄ້າຂະໜາດໃຫຍ່, ແບບແຜນການຜະລິດກະສິກຳໃຫ້ຖືກຕ້ອງຕາມກຸ່ມເປົ້າໝາຍຂອງຜູ້ຊື້ ແລະ ຫັ່ນປ່ຽນຈຸດອ່ອນກາຍມາເປັນໂອກາດ ໂດຍການສັງເກດພຶດຕິກຳ ຂອງກຸ່ມຜູ້ຊື້ ແລະ ພື້ນທີ່ໃນການຜະລິດຜົນລະປູກທີ່ມີສາມາດເກີດຜົນໄດ້ດີວ່າ. ຄວາມຮູ້ທີ່ຖືກແບ່ງປັນຕ່າງໆ ຈະເປັນບົດຮຽນອັນລ້ຳຄ່າໃຫ້ສະມາຊິກໃນການເຜີຍແຜ່ ແລະ ການຝຶກອົບຮົບໃຫ້ກັບປະຊາຊົນໃນກຸ່ມເປົ້າໝາຍໄດ້ດີ. ອ່ານຕໍ່ https://tinyurl.com/yc2f53ae





ອ່ານຕໍ່ໜ້າຖັດໄປ >>>



ການລົງເຜີຍແຜ່ວຽກການສົ່ງເສີມສິດແມ່ຍິງກ່ຽວກັບທີ່ດິນ ທີ່ແຂວງຈຳປາສັກ (COP WLR Field Visit)

ໃນລະຫວ່າງວັນທີ 5-8 ພະຈິກ, ຊຸມຊົນ ແຫ່ງການຮຽນຮູ້ ການສົ່ງສິດທິແມ່ຍິງ ກ່ຽວກັບທີ່ດິນຂອງແມ່ຍິງ (COP-WLR) ໄດ້ລົງຢ້ຽມຢາມ 3 ບ້ານເປົ້າໝາຍ ຂອງອົງການສະມາຊິກ WWF-ລາວ ຮ່ວມກັບພາກສ່ວນຕ່າງໆຂອງ ລັດຖະບານທ້ອງຖິ່ນ ທີ່ເມືອງໂຂງ, ແຂວງຈຳປາສັກ. ຈຸດປະສົງແມ່ນເພື່ອຊຸກຍູ້ ໃຫ້ບັນດາບ້ານຕ່າງໆຕໍ່ກັບວຽກງານຄວາມສະເໝີພາບລະຫວ່າງຍິງ-ຊາຍໃນ ບັນຫາທີ່ດິນໂດຍນຳໃຊ້ເຄື່ອງມື ການສົ່ງເສີມສິດແມ່ຍິງກ່ຽວກັບທີ່ດິນ (WLR) ທີ່ພັດທະນາໂດຍ ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ (LIWG), ພ້ອມ ຍັງສະໜອງໂອກາດໃຫ້ຊາວບ້ານໄດ້ຮັບຄຳປຶກສາດ້ານກົດໝາຍຈາກ ທະນາຍຄວາມທີ່ໄດ້ລົງທະບຽນ, ແລະ ເພີ່ມຄວາມສາມາດ, ຄວາມເຊື່ອໝັ້ນ ຂອງສະມາຊິກ ຊຸມຊົນແຫ່ງການຮຽນຮູ້ (CoP) ແລະ ພາກສ່ວນລັດຖະບານ ໃນການນຳໃຊ້ ອຸປະກອນເຄື່ອງມື WLR ເພື່ອອຳນວຍຄວາມສະດວກໃຫ້ແກ່ ການປຶກສາຫາລືກ່ຽວກັບຄວາມສຳເໜີພາບທາງເພດ, ອ່ານເພີ່ມ https://tinyurl.com/jw76ty9r





ກຸ່ມ COP WLR ແມ່ນສະໜັບສະໜູນໂດຍ ອົງການ MRLG.

ກອງປະຊຸມຖອດຖອນບົດຮຽນຈາກການເຜີຍແຜ່ວຽກການສົ່ງເສີມແມ່ຍິງກ່ຽວກັບທີ່ດິນ





ໃນວັນທີ 26 ພະຈິກ 2024, LIWG ໄດ້ອຳນວຍຄວາມສະດວກໃຫ້ແກ່ກອງປະຊຸມເພື່ອ ແລກປ່ຽນບົດຮຽນຈາກພາກສະໜາມ ແລະ ການພັດທະນາຫຼ້າສຸດກ່ຽວກັບການສົ່ງເສີມ ສິດແມ່ຍິງກ່ຽວກັບທີ່ດິນ. ສະມາຊິກຂອງ COP-WLR ໄດ້ສະທ້ອນໃຫ້ເຫັນເຖິງ ປະສົບການຈາກການລົງຢ້ຽມຢາມສາມຄັ້ງທີ່ຜ່ານມາ, ໂດຍສະເພາະສິ່ງທ້າທາຍໃນການຈັດຕັ້ງ ປະຕິບັດທີ່ເປັນປະຈັກຕາ ແລະ ບັນຫາທີ່ຊຸມຊົນຢູ່ໃນແຕ່ລະເຂດພູມສັນຖານທີ່ແຕກຕ່າງ ກັນ (ພູເຂົາເຫນືອ, ທາງການຄ້າ, ແຄມແມ່ນ້ຳພາກໃຕ້). ADWLE ແບ່ງປັນປະສົບການໃນ ການປະກອບສ່ວນເຂົ້າໃນຂະບວນການລາຍງານແຕ່ລະໄລຍະກ່ຽວກັບສົນທິສັນຍາກ່ຽວກັບ ການລົບລ້າງຂອງການຈຳແນກຕໍ່ແມ່ຍິງໃນທຸກຮູບແບບ. ສຸດທ້າຍຜູ້ເຂົ້າຮ່ວມໄດ້ປຶກສາຫາລື ກ່ຽວກັບການປັບປຸງເຄື່ອງມືຝຶກອົບຮົມ ແລະ ອະນຸສັນຍາການຈັດຕັ້ງປະຕິບັດຂອງ WLR, ພື້ນທີ່ເປົ້າໝາຍໃນການເດີນທາງພາກສະໜາມໃນອະນາຄົດ, ແລະ ວິທີການສົ່ງເສີມສິດທິ ທີ່ດິນຂອງແມ່ຍິງຕື່ມອີກ.. ອ່ານຕໍ່ https://tinyurl.com/4c5ub3nm

ຖ້າທ່ານສົນໃຈທີ່ເຂົ້າຮ່ວມເປັນສະມາຊິກ LIWG ຫຼື COP ກະລຸນາຕິດຕໍ່ທີ່ co@laolandinfo.org

ອ່ານຕໍ່ໜ້າຖັດໄປ >>>



ປະຕິທິນກົດໝາຍ

ການນຳສະເໜີປະຕິທິນກົດໝາຍປີ 2025





ງານນຳສະເໜີ ປະຕິທິນກົດໝາຍປີ 2025 ໄດ້ເປີດຂຶ້ນຢ່າງເປັນທາງການໃນວັນທີ 3 ທັນວາ 2024 ຢູ່ທີ່ ສູນຝຶກອົບຮົມແນວລາວສ້າງຊາດ. ກອງປະຊຸມທີ່ມີຜູ້ເຂົ້າຮ່ວມຫຼາຍກວ່າ 50 ທ່ານ, ໂດຍລວມມີຈາກສະພາແຫ່ງຊາດ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະຊວງກະສິກຳ ແລະ ປ່າໄມ້, ຄະນະນິຕິສາດ ແລະ ລັດຖະສາດ, ສື່ມວນຊົນ, ອົງການຈັດຕັ້ງທາງສັງຄົມ ແລະ ອົງການຈັດຕັ້ງສາກົນ. ປະຕິທິນກົດໝາຍ 2025 ໄດ້ພິມອອກຫຼາຍກວ່າ 13,000 ສະບັບ ແລະ ຈະໄດ້ແຈກຢາຍໂດຍ LIWG ໃຫ້ແກ່ສະພາແຫ່ງຊາດ, ອົງການລັດຖະບານ ແລະ ອົງການຈັດຕັ້ງສະມາຊິກ ເພື່ອນຳໃຊ້ເຂົ້າໃນວຽກງານໂຄສະນາເຜີຍແຜ່ຢູ່ບັນດາບ້ານຕ່າງໆໃນທົ່ວປະເທດລາວ. ໄດ້ຄຳເຫັນວ່າ ""
ອ່ານຕໍ່ https://tinyurl.com/bdfsab3w, ທ່ານ ສາມາດດາວໂຫຼດ ປະຕິທິນກົດໝາຍ 2025 ໄດ້ທີ່: https://tinyurl.com/y5xzxv92

"ໃນການນຳສະເໜີກົດໝາຍຜ່ານປະຕິທິນທີ່ມີຄຸນຄ່ານີ້ເປັນສິ່ງທີ່ໜ້າສົນໃຈຫຼາຍ ແລະ ຍັງເປັນໂຄງຮ່າງທີ່ແທດເໝາະແກ່ໃຫ້ກຸ່ມເປົ້າໝາຍໃຫ້ສາມາດຊຶມຊັບກົດໝາຍໄດ້ງ່າຍຂຶ້ນ"

- ທ່ານ ຂັນທອງ ແພງສີໄລ, ຮອງຫົວໜ້າກົມບໍລິຫານ - ພິທີການ, ສະພາແຫ່ງຊາດ

ການຝຶກອົບຮົມການເປັນຄູຝຶກ ກ່ຽວກັບປະຕິທິນກົດໝາຍ 2025





ຫຼັງຈາກໄດ້ງານນຳສະເໜີ ປະຕິທິນກົດໝາຍສຳລັດລົງ ກໍໄດ້ມີການຝຶກອົບຮົມການເປັນຄູຝຶກໃຫ້ແກ່ສະມາຊິກ ໃນວັນທີ 4 ຫາ 5 ທັນວາ 2024. ການຝຶກອົບຮົມແມ່ນສ້າງຂຶ້ນໃນຫຼາຍຮູບແບບ ໂດຍເນັ້ນໃສ່ 6 ຫົວຂໍ້ຈາກປະຕິທິນລວມມີ ກຳມະສິດ-ສິດນຳໃຊ້ທີ່ດິນ ແລະ ການເສຍສິດນຳໃຊ້ທີ່ດິນ; ຄວາມສະເໝີພາບຍິງ - ຊາຍ ໃນການຄຸ້ມຄອງການນຳໃຊ້ທີ່ດິນ; ຄວາມຮັບຜິດຊອບໃນການລົງທຶນສຳປະທານຂຸດຄົ້ນຊັບພະຍາກອນທຳມະຊາດ; ການປົກປັກຮັກສາທີ່ດິນປ່າໄມ້ ແລະ ການຄຸ້ມຄອງປ່າແຫ່ງນ້ຳຂັ້ນບ້ານມີສ່ວນຮ່ວມ; ຄວາມຮັບຜິດຊອບໃນການຄຸ້ມຄອງ ແລະ ການນຳໃຊ້ສານເຄມີ; ການບຸກລຸກພື້ນທີ່ປ່າໄມ້ ແລະ ມາດຕະການຕໍ່ລະເມີດ ໂດຍຄູຝຶກ ຈາກທີມງານສ້າງປະຕິທິນກົດໝາຍ 2025. ຈາກຜົນການປະເມີນເຫັນວ່າ ຜູ້ເຂົ້າຮ່ວມທັງໝົດມີຄວາມຍິນດີຈະເຜີຍແຜ່ປະຕິທິນນີ້ໃນກຸ່ມບ້ານເປົ້າໝາຍຂັ້ນຊຸມຊົນ ແລະ ຄິດເຫັນວ່າເປັນສິ່ງມີ່ເປັນປະໂຫຍດຫຼາຍຕໍ່ກັບຊຸມຊົນ ແລະ ໃນຂົງເຂດຂອງອົງກອນຂອງຕົນເອງ. ອ່ານຕໍ່
https://tinyurl.com/2d2jn5j2

ອ່ານຕໍ່ໜ້າຖັດໄປ >>>



ອັບເດດວຽກງານໂຄງການ PIASVC

ການຝຶກອົບຮົມການເປັນຄູຝຶກ ພາຍໃຕ້ຫົວຂໍ້ ການໄກ່ເກ່ຍຂໍ້ຂັດແຍ່ງ ແລະ ການໃຫ້ຄຳປຶກສາທາງດ້ານກົດໝາຍທີ່ດິນຢູ່ຂັ້ນບ້ານ





ໃນລະຫວ່າງວັນທີ 7 ຫາ 11 ຕຸລາ 2024, ໂຄງການ PIASVC ໄດ້ດຳເນີນການທົບທວນຄືນ ການຝຶກອົບຮົມການເປັນຄູຝຶກ ສຳລັບອົງກອນທີ່ໄດ້ຮັບທຶນຍ່ອຍໃນຫົວຂໍ້ ການໄກ່ເກ່ຍຂໍ້ຂັດແຍ່ງ ແລະ ການໃຫ້ຄຳປຶກສາທາງດ້ານກົດໝາຍກ່ຽວກັບທີ່ດິນຢູ່ຂັ້ນບ້ານ. ການຝຶກອົບຮົມລວມ 5 ວັນ ທິດສະດີ ແລະ ການປະຕິບັດ, ລວມທັງການຈຳລອງ ການຍື່ນຄຳຮ້ອງຟ້ອງ, ຈາກການໄກ່ເກ່ຍຂັ້ນບ້ານ ຈົນເຖິງການຍື່ນສານ. ການຝຶກອົບຮົມດັ່ງກ່າວ ແນໃສ່ສ້າງຄວາມຮູ້ພື້ນຖານໃຫ້ແກ່ຜູ້ຮັບເໝົາໃນຂັ້ນບ້ານ ໃນການໄກ່ເກ່ຍຂໍ້ຂັດແຍ່ງທີ່ດິນຂັ້ນບ້ານ, ໃຫ້ເຂົາເຈົ້າສາມາດນຳໃຊ້ຄວາມຮູ້ທີ່ໄດ້ມາຢູ່ຂັ້ນຮາກຖານ ໂດຍໃຊ້ເຄື່ອງມື ແລະ ປ້າຍໂຄສະນາທີ່ໂຄງການສະໜອງໃຫ້. ບັນດາຜູ້ຮັບທຶນພາຍໃຕ້ຈະສືບຕໍ່ສ້າງຈິດສຳນຶກໃນຫົວຂໍ້ນີ້ຢູ່ບ້ານເປົ້າໝາຍໃນທົ່ວ 8 ແຂວງ. ອ່ານເພີ່ມເຕີມ https://tinyurl.com/4mx45k83

ທ່ານສາມາດເຂົ້າເບິ່ງອຸປະກອນເຄື່ອງມືຝຶກອົບຮົມໄດ້ທີ່:
https://tinyurl.com/2wf5dfc7
https://tinyurl.com/3u2hwden

ການຕິດຕາມຜົນຈັດຕັ້ງປະຕິບັດຂອງອົງກອນທີ່ໄດ້ຮັບທຶນຍ່ອຍ ທີ່ ຊຽງຂວາງ





ໃນເດືອນພະຈິກ 2024, LIWG ແລະ ທີມງານໂຄງການ PIASVC ໄດ້ລົງພາກສະໜາມເພື່ອຕິດຕາມ ແລະ ຜົນຂອງການຈັດຕັ້ງປະຕິບັດຂອງອົງກອນທີ່ໄດ້ຮັບທຶນຍ່ອຍ PDDA ໃນການປຸກລະດົມຄວາມຮູ້ກ່ຽວກັບການໄກ່ເກ່ຍຂອງບ້ານ ແລະ ສິດທີ່ດິນຕາມຮີດຄອງປະເພນີໃຫ້ແກ່ຊາວບ້ານ 199 ຄົນ ຈາກ 7 ບ້ານເປົ້າໝາຍໃນເມືອງໝອກ ແຂວງຊຽງຂວາງ. ເຄື່ອງມືຝຶກອົບຮົບເຊັ່ນ ວີດີໂອທີ່ເປັນພາສາມົ້ງ ແລະ ໂປສເຕີທີ່ມີສ່ວນຮ່ວມທີ່ສ້າງຂຶ້ນພາຍໃຕ້ໂຄງການ PIASVC ມີປະໂຫຍດຫຼາຍໃນການຊ່ວຍໃຫ້ຊາວບ້ານມົ້ງສ່ວນໃຫຍ່ເຂົ້າໃຈໄດ້ງ່າຍຂຶ້ນວ່າສິດທິທີ່ດິນຕາມປະເພນີເໝາະສົມກັບກົດໝາຍແຫ່ງຊາດແນວໃດ ແລະ ວິທີການກຳນົດສິດເຫຼົ່ານັ້ນຕາມກົດໝາຍທີ່ດິນ (2019) ເຊັ່ນກັນ. ອ່ານເພີ່ມ https://tinyurl.com/axbx9245

“ຜູ້ຕາງໜ້າລັດຖະບານທີ່ລົງມາຢ້ຽມຢາມໝູ່ບ້ານຫ່າງໄກສອກຫຼີກເພື່ອເຜີຍແຜ່ຂໍ້ມູນຂ່າວສານທີ່ເປັນປະໂຫຍດຕ່າງໆນີ້ ຈະຊ່ວຍຫຼຸດຜ່ອນຄວາມຂັດແຍ້ງ ແລະ ສົ່ງເສີມຄວາມສາມັກຄີພາຍໃນຊຸມຊົນຂອງເຂົາເຈົ້າ.”

- ຊາວບ້ານໄດ້ໃຫ້ຄຳເຫັນຕໍ່ກັບໂຄງການ

ອ່ານຕໍ່ໜ້າຖັດໄປ >>>



ອັບເດດວຽກງານໂຄງການ PIASVC

ການຈັດງານເທດສະການສົ່ງເສີມແລກປ່ຽນບົດຮຽນ ແລະ ປະສົບການກ່ຽວກັບ ວຽກງານອາສາສະໝັກຜູ້ອຳນວຍຄວາມສະດວກຂັ້ນບ້ານ ທີ່ແຂວງ ສາລະວັນ





ອົງການບ້ານຈຸດສຸມສາກົນ **Village Focus International** ໜຶ່ງ ໃນສະມາຊິກ ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ ຊຶ່ງເປັນອົງການໜຶ່ງທີ່ໄດ້ຮັບ ການສະໜັບສະໜູນທຶນຍ່ອຍ ຈາກໂຄງການ ການໃຫ້ຂໍ້ມູນສາທາລະນະ ແລະ ການໃຫ້ຄວາມຮູ່ແກ່ຊຸມຊົນທີ່ມີຄວາມບອບບາງ ໃນ ສປປ ລາວ **PIASVC Project** ໄດ້ມີການຈັດງານເທດສະການສົ່ງເສີມແລກປ່ຽນ ບົດຮຽນ ແລະ ປະສົບການກ່ຽວກັບວຽກງານອາສາສະໝັກຜູ້ອຳນວຍ ຄວາມສະດວກຂັ້ນບ້ານຂອງ ເມືອງ ເລົ່າງາມ ແລະ ເມືອງ ສາລະວັນ ໃນວັນທີ 11 ຫາ 12 ທັນວາ 2024 ທີ່ສູນຮຽນຮູ້ສີຂຽວ **Green Earth Center** ຊຶ່ງມີແຂກເຂົ້າຮ່ວມຢ່າງຫຼາກຫຼາຍຈາກຂັ້ນກະຊວງ, ຂັ້ນແຂວງ, ເມືອງ, ສະຖາບັນການສຶກສາ, ອົງການຈັດຕັ້ງທາງສັງຄົມ ແລະ ປະຊາຊົນ ຈາກ 24 ບ້ານເປົ້າໝາຍ ລວມທັງໝົດ 238 ທ່ານ, ຍິງ 120 ຄົນ.

ຈຸດປະສົງຂອງກິດຈະກຳນີ້ແມ່ນສ້າງຂຶ້ນເພື່ອແລກປ່ຽນບົດຮຽນ ລະຫວ່າງ ອົງການປົກ ຄອງບ້ານ, ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງບ້ານ, ຜູ້ອຳນວຍຄວາມ ສະດວກ ແລະ ຜູ້ໃຫ້ຄຳປຶກສາຂັ້ນບ້ານ ໃນການປະຕິບັດກິດຈະກຳໃນໄລຍະ ຜ່ານມາ ທັງເປັນການນຳສະເໜີບັນດາອຸປະກອນເຄື່ອງມືທີ່ໄດ້ພັດທະນາ ແລະ ນຳໃຊ້ໃນການຝຶກອົບຮົມ ແລະ ເຜີຍແຜ່ຢູ່ໃນຂັ້ນບ້ານ ຊຶ່ງເປັນເຄື່ອງມື ທີ່ພັດທະນາປັບປຸງຈາກຄວາມຮຽກຮ້ອງຕ້ອງການ, ການມີສ່ວນຮ່ວມຂອງ ກຸ່ມເປົ້າໝາຍ ໂດຍເນັ້ນໃຫ້ ເຄື່ອງມືດັ່ງກ່າວມີຄວາມເຂົ້າໃຈງ່າຍ ແລະ ສາມາດ ນຳໃຊ້ແທດເໝາະກັບຊຸມຊົນໃຫ້ຫຼາຍຂຶ້ນ.

ອ່ານຕໍ່ https://tinyurl.com/3h8yxzsw

"ຂ້າພະເຈົ້າ ຮູ້ສຶກພາກພູມໃຈຫຼາຍໄດ້ມີໂອກາດມີສ່ວນຮ່ວມ ໂຄງການສົ່ງເສີມການສ້າງຄວາມເຂັ້ມແຂງໃຫ້ອາສາສະໝັກຂັ້ນ ບ້ານນີ້, ຂ້າພະເຈົ້າໄດ້ຮຽນຮູ້ຫຼາຍຢ່າງຈາກກິດຈະກຳເຊັ່ນ: ຄວາມສະເໝີພາບຕໍ່ກັບບົດບາດຍິງ-ຊາຍ, ການເພີ່ມທັກສະ ແລະ ຄວາມໝັ້ນໃຈໃນການອະທິບາຍເລື່ອງກົດໝາຍ, ການໃຫ້ຄຳປຶກສາ ແລະ ການໄກ່ເກ່ຍເວລາຊາວບ້ານມີຂໍ້ຂັດແຍ່ງຕ່າງໆ, ເຊິ່ງ ຂ້າພະເຈົ້າເຊື່ອວ່າສິ່ງທີ່ຂ້າພະເຈົ້າໄດ້ຮັບຈະເປັນສິ່ງທີ່ເປັນປະໂຫຍດໃຫ້ແກ່ໂຕເຮົາເອງ, ຊາວບ້ານ, ແລະ ສັງຄົມໃນວົງກວ້າງ."

- ຜູ້ອຳນວຍສຳດວກຂັ້ນບ້ານໄດ້ກ່າວຄວາມຮູ້ສຶກຕໍ່ກັບໂຄງການ, ຈາກບ້ານ ຫ້ວຍເປົ້າ

ອ່ານຕໍ່ໜ້າຖັດໄປ >>>



ກຸ່ມຂະແໜງການຍ່ອຍທີ່ດິນ ແລະ ກຸ່ມຍ່ອຍຕ່າງໆ

ກຸ່ມຍ່ອຍ - ການສົ່ງເສີມສິດແມ່ຍິງກ່ຽວກັບທີ່ດິນ (FG-WLR)






ກຸ່ມຍ່ອຍ ການສົ່ງສິດແມ່ຍິງກ່ຽວກັບທີ່ດິນ (FG-WLR) ໄດ້ປະຊຸມກັນ ໃນວັນທີ 19 ທັນວາ 2024 ເພື່ອດຳເນີນການກະກຽມຂັ້ນສຸດທ້າຍ ເພື່ອ ກະກຽມສະເໜີຕົວຕໍ່ ກອງປະຊຸມຂະແໜງການທີ່ດິນຍ່ອຍ (LSSWG) ໃນຕົ້ນປີ 2025. ສະມາຊິກເບື້ອງຕົ້ນຂອງ FG-WLR ລວມມີຜູ້ ຊ່ຽວຊານດ້ານບົດບາດຍິງຊາຍຈາກ ອົງການຈັດຕັ້ງສາກົນ ແລະ ອົງການ ຈັດຕັ້ງທາງສັງຄົມ, ທະນາຍຄວາມ ແລະ ນັກວິຊາການ. FG-WLR ຍັງໄດ້ ດຳເນີນການວິເຄາະ SWOT ຂະໜາດນ້ອຍ ແລະການວາງແຜນ ຍຸດທະສາດເພື່ອພັດທະນາແຜນທີ່ເສັ້ນທາງສຳລັບການປະຕິບັດງານໃນ ອະນາຄົດຂອງຕົນເມື່ອມັນໄດ້ຖືກສ້າງຕັ້ງຂຶ້ນຢ່າງເປັນທາງການພາຍໃຕ້ LSSWG ໃນປີ 2025. ການສ້າງຕັ້ງ FG-WLR ໃນເບື້ອງຕົ້ນໄດ້ຮັບ ການສະຫນັບສະຫນູນຈາກ GIZ ແລະ Helvetas Laos. ນອກຈາກ ນັ້ນ, ຍັງມີ

ກຸ່ມຍ່ອຍ - ການລົງທຶນກະສິກຳຢ່າງມີຄວາມຮັບຜິດຊອບ (FG-RAI)

ກຸ່ມຍ່ອຍ ການລົງທຶນກະສິກຳຢ່າງມີຄວາມຮັບຜິດຊອບ (FG RAI) ທີ່ມີ ຈຸດປະສົງຕົ້ນຕໍເພື່ອອຳນວຍຄວາມສະດວກໃຫ້ແກ່ການແລກປ່ຽນຄວາມຮູ້ ແລະ ການສະໜັບສະໜູນລະຫວ່າງບັນດາພາກສ່ວນກ່ຽວຂ້ອງໃນການ ລົງທຶນທາງດ້ານກະສິກຳ ແລະ ປ່າໄມ້. ໃນນັ້ນລວມທັງການປະສານສົມທົບ ກັບບັນດາສະມາຊິກໃນການປະຕິບັດຂໍ້ແນະນຳຂອງອາຊຽນ-RAI, ແບ່ງປັນ ບົດປະຕິບັດທີ່ດີທີ່ສຸດ ແລະ ບົດຮຽນທີ່ ຖອດຖອນໄດ້, ແລະເຜີຍແຜ່ນະໂຍ ບາຍ ທີ່ກ່ຽວຂ້ອງ ແລະ ກົດລະບຽບ.ໂດຍການເຮັດໜ້າທີ່ເປັນເວທີປຶກສາ ຫາລື ແລະ ການຮ່ວມມື, FG-RAI ມີຈຸດປະສົງເພື່ອມີອິດທິພົນຕໍ່ການ.



ຕັດສິນໃຈນະໂຍບາຍ, ປັບປຸງການປະຕິບັດການລົງທຶນ, ແລະສຸດທ້າຍໄດ້ເສີມຂະຫຍາຍຄວາມຍືນຍົງ ແລະ ການເຊື່ອມໂຍງຂອງການລົງທຶນທີ່ດິນໃນລາວ
ອ່ານຕໍ່ https://tinyurl.com/sw8vbpb4

ອ່ານຕໍ່ໜ້າຖັດໄປ >>>



ກິດຈະກຳທີ່ຈະເກີດຂຶ້ນ (ເດືອນ ມັງກອນ – ມີນາ 2025)

- ກິດຈະກຳ Annual Symposium PIASVC
- ກອງປະຊຸມສາມັນປະຈຳປີ LIWG ປີ 2025 (AGM)
- ການຢ້ຽມຢາມ ແລະ ຖອດຖອນບົດຮຽນກັບສາມາຊິກ 2025 (Retreat)
- ກອງປະຊຸມຂະແໜງການຍ່ອຍທີ່ດິນ (LSSWG)
- ກິດຈະກຳການລົງນາລົງ ການສົ່ງເສີມສິດແມ່ຍິງກ່ຽວກັບທີ່ດິນ (WLR Campaign).
- ກອງປະຊຸມປຶກສາຫາລືກ່ຽວກັບວຽກງານທີ່ດິນ (AG Meeting)

ຂອບໃຈສຳລັບການອ່ານຈົດໝາຍຂ່າວຂອງພວກເຮົາ

